**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະຈັດຕັ້ງສູນກາງພັກ

ເລກທີ 1375/ຄຈສພ

ນະຄອນຫຼວງວຽງຈັນ, ວັນທີ 18 ສິງຫາ 2025

# ແຈ້ງການ

ເຖິງ: ກະຊວງ, ອົງການ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ.

ເລື່ອງ: ການຈັດຕັ້ງປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ.

- ອີງຕາມ ກົດໝາຍ ວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມ ມະຕິຕົກລົງ ຂອງກົມການເມືອງສູນກາງພັກ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 18/ກມສພ, ລົງວັນທີ 02 ກັນຍາ 2022.

ຄະນະຈັດຕັ້ງສູນກາງພັກ ແຈ້ງມາຍັງທ່ານ ຊາບວ່າ: ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດນະໂຍບາຍຮັບອຸດໜູນບຳນານ ຂອງພະນັກງານ-ລັດຖະກອນ ໃນຂອບເຂດທົ່ວປະເທດ ມີຄວາມເປັນເອກະພາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ, ຈຶ່ງອອກແຈ້ງການແນະນຳ ດັ່ງນີ້:

1. ການສະເໜີ ໃຫ້ພະນັກງານ-ລັດຖະກອນ ຂອງບັນດາກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບອຸດໜູນບຳນານ ໃຫ້ປະຕິບັດຕາມ ແຈ້ງການແນະນຳ ຂອງລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 2441/ຮສສ, ລົງວັນທີ 08 ສິງຫາ 2025;
2. ການປະຕິບັດ ເງິນເດືອນ, ເງິນອຸດໜູນ ແລະ ນະໂຍບາຍຕ່າງໆ ຂອງພະນັກງານ-ລັດຖະກອນ ຜູ້ທີ່ມະຕິຕົກລົງ ຂອງ ຄະນະເລຂາທິການສູນກາງພັກ ຫຼື ດຳລັດ ຂອງ ນາຍົກລັດຖະມົນຕີ ຫຼື ແຈ້ງການ ຂອງ ຄະນະຈັດຕັ້ງສູນກາງພັກການຮັບອຸດໜູນບຳນານ ແມ່ນໃຫ້ປະຕິບັດ ພາຍໃນ ງວດ III ແລະ IV ປີ 2025;
3. ສຳລັບ ພະນັກງານ-ລັດຖະກອນ ຜູ້ທີ່ ຄະນະຮັບຜິດຊອບປັບປຸງກົງຈັກການຈັດຕັ້ງ ອອກແຈ້ງການຮັບຮອງເອົາການອອກພັກການ-ຮັບອຸດໜູນບຳນານ ຕາມເງື່ອນໄຂການຮັບອຸດໜູນບຳນານ ທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດ ປະທານປະເທດ ສະບັບເລກທີ 002/ປປທ, ລົງວັນທີ 02 ມິຖຸນາ 2025, ແຕ່ບໍ່ທັນມີມະຕິຕົກລົງ ຂອງ ຄະນະເລຂາທິການສູນກາງພັກ ຫຼື ດຳລັດ ຂອງ ນາຍົກລັດຖະມົນຕີ ຫຼື ແຈ້ງການ ຂອງ ຄະນະຈັດຕັ້ງສູນກາງພັກ ໃຫ້ຮັບອຸດໜູນບຳນານ ໃຫ້ກະຊວງ, ອົງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສະເໜີຫາ ຄະນະຈັດຕັ້ງສູນກາງພັກ ເພື່ອອອກແຈ້ງການ ຫຼື ສະເໜີຂັ້ນເທິງ ອອກມະຕິຕົກລົງ ຫຼື ດຳລັດ ໃຫ້ຮັບອຸດໜູນບຳນານ ຕາມຂັ້ນຕອນ ແລະ ລະບຽບການ;
4. ນັບແຕ່ງວດ I ປີ 2026 ເປັນຕົ້ນໄປ ການສະເໜີຮັບອຸດໜູນບຳນານ ຂອງພະນັກງານ-ລັດຖະກອນ ໃຫ້ປະຕິບັດ ຕາມລັດຖະບັນຍັດ ສະບັບເລກທີ 002/ປປທ, ລົງວັນທີ 02 ມິຖຸນາ 2025 ແລະ ລະບຽບການທີ່ກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ຫົວໜ້າຄະນະຈັດຕັ້ງສູນກາງພັກ**

**ບ່ອນນຳສົ່ງ:**

1. ສຳເນົາຄະນະຈັດຕັ້ງສູນກາງພັກ 02 ສະບັບ;
2. ກະຊວງ, ອົງການ ແລະ ບັນດາແຂວງ 02 ສະບັບ.

**ນ.ສີໃສ ລືເດດມູນສອນ**